ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄະນະນຳ ທຫລ ເຂົ້າຮ່ວມກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ແລະ ລົງເຄື່ອນໄຫວວຽກງານ ຢູ່ ສາຂາ ທຫລ ພາກກາງ ແລະ ພາກໃຕ້




ໃນລະຫວ່າງວັນທີ 13-17 ມີນາ 2023, ຄະນະຮັບຜິດຊອບເຜີຍແຜ່ກົດໝາຍຈາກສຳນັກງານໃຫຍ່ ທຫລ ໄດ້ຈັດກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ທີ່ ສາຂາ ທຫລ ພາກກາງ ສະຫວັນນະເຂດ ແລະ ສາຂາ ທຫລ ພາກໃຕ້ ຈຳປາສັກ, ພາຍໃຕ້ການໃຫ້ກຽດເຂົ້າຮ່ວມ ພ້ອມທັງ ເປັນປະທານໂດຍທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ, ໂດຍມີຄະນະສາຂາ ທຫລ ພ້ອມດ້ວຍພະນັກງານ, ຕາງໜ້າສະມາຊິກສະພາແຂວງ, ຕາງໜ້າຫ້ອງວ່າການແຂວງ, ສາຂາທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ເຂົ້າຮ່ວມຢ່າງພ້ອມພຽງ. ກອງປະຊຸມຄັ້ງນີ້, ຈັດຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການໃນການປັບປຸງວຽກງານຄຸ້ມຄອງເງິນຕາຕ່າງ ປະເທດໃຫ້ມີຄວາມຄ່ອງຕົວ ແລະ ສອດຄ່ອງກັບຈຸດພິເສດຂອງແຕ່ລະທ້ອງຖິ່ນ ໂດຍການນຳໃຊ້ ແລະ ຜັນຂະຫຍາຍກົດໝາຍດັ່ງກ່າວເຂົ້າໃນການຄຸ້ມຄອງເງິນຕາຕ່າງປະທດຢ່າງມີປະສິດທິພາບ.



ພາຍຫຼັງການເຜີຍແຜ່ກົດໝາຍດັ່ງກ່າວ, ທ່ານ ຮອງຜູ້ວ່າການ ແລະ ຄະນະຕິດຕາມ ກໍ່ໄດ້ເຂົ້າພົບປະກັບເຈົ້າໜ້າທີ່ປະຈໍາດ່ານພາສີ ແລະ ບັນດາທະນາຄານທຸລະກິດ ເພື່ອຕິດຕາມການຄຸ້ມຄອງເງິນຕາຕ່າງປະເທດ, ການເກັບຄ່າບໍລິການ, ສະພາບການຄ້າຊາຍແດນ, ພ້ອມທັງໄດ້ຍົກໃຫ້ເຫັນບັນຫາ ແລະ ສິ່ງທ້າທາຍໃນການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອໃຫ້ເຈົ້າໜ້າທີ່ດ່ານ ແລະ ທະນາຄານທຸລະກິດ ກໍາໄດ້ສະພາບບັນຫາທີ່ຕິດພັນກັບແຕ່ລະພາກສ່ວນ ແລະ ແລກປ່ຽນຂໍ້ມູນເຊິ່ງກັນແລະກັນ ຢ່າງເປັນປົກກະຕິ. ນອກຈາກນີ້, ຄະນະຂອງ ທ່ານ ຮອງຜູ້ວ່າການ ຍັງໄດ້ລົງເຄື່ອນໄຫວຢ້ຽມຢາມບັນດາບໍລິສັດ ແລະ ຜູ້ປະກອບການທຸລະກິດ ຈໍານວນໜຶ່ງ ເປັນຕົ້ນ ດ່ານທ່າບົກ ແລະ ເຂດເສດຖະກິດພິເສດ ເພື່ອເກັບກໍາສະພາບການດໍາເນີນໂຄງການ ແລະ ການເຄື່ອນໄຫວທຸລະກິດ ໂດຍສະເພາະວຽກງານການຊໍາລະສະສາງພາຍໃນ ແລະ ສາກົນ, ການນໍາທຶນເຂົ້າ - ອອກ ແລະ ອື່ນໆ.



ຂ່າວ-ພາບໂດຍ : ອັກຄະພົນ ນາມມະຈັກ

*ຢູ່ເມືອງລາວໃຊ້ເງິນກີບລາວ*